ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ປະກາດປັບປຸງການຈັດຕັ້ງ






ໃນຕອນເຊົ້າ ວັນທີ 02 ກັນຍາ 2022 ທີ່ຫ້ອງປະຊຸມທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ມີພິທີປະກາດປັບປຸງການຈັດຕັ້ງຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ຂຶ້ນ ໂດຍໃຫ້ກຽດເປັນປະທານໂດຍທ່ານ ນາງ ວັດທະນາ ດາລາລອຍ, ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ຂສລ ແລະ ການເຂົ້າຮ່ວມຂອງຄະນະສະພາບໍລິຫານ ຂສລ, ບັນດາກົມທີ່ກ່ຽວຂ້ອງ ພ້ອມດ້ວຍພະນັກງານ ຂສລ ທັງໝົດເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີດັ່ງກ່າວໄດ້ຮັບຟັງການລາຍງານສະພາບການເຄື່ອນໄຫວວຽກງານຂອງບົດສະຫຼຸບໂດຍສັງເຂບກ່ຽວກັບການເຄື່ອນໄຫວວຽກງານບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໄລຍະ 8 ເດືອນຂອງປີ 2022 ແລະ ແຜນ 4 ເດືອນທ້າຍປີ 2022 ເຊິ່ງນໍາສະເໜີໂດຍ ທ່ານ ນ. ເພັດລໍາພອນ ຄໍາບໍເພັດ ຮອງຜູ້ອໍານວຍການ ຂສລ ແລະ ໄດ້ຮັບຟັງການປະກາດຂໍ້ຕົກລົງກ່ຽວກັບການປັບປຸງການຈັດຕັ້ງ 2 ສະບັບ ໂດຍທ່ານ ນາງ ວິນຄໍາ ລຸນທອນ ຜູ້ອໍານວຍການ ຂສລ ຄື: 1. ຂໍ້ຕົກລົງວ່າດ້ວຍການອະນຸມັດໃຫ້ພະນັກງານອອກພັກການ-ຮັບອຸດໜູນບໍານານ ໂດຍໃຫ້ທ່ານ ນາງ ພອນສະຫວັນ ໂຄດສຸວັນ ອະດີດຮອງຜູ້ອໍານວຍການ ຂສລ ເຂົ້າປະຈໍາການຢູ່ທະນາຄານແຫ່ງ ສປປ ລາວ ແລະ ອະນຸມັດໃຫ້ຜູ້ກ່ຽວອອກພັກການ-ຮັບອຸດໜູນບໍານານນັບແຕ່ເດືອນກັນຍາ 2022 ເປັນຕົ້ນໄປ; 2. ຂໍ້ຕົກລົງວ່າດ້ວຍແຕ່ງຕັ້ງ ທ່ານ ນາລິນ ສີລະວົງສິດ ທີ່ຍົກຍ້າຍມາຈາກທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ມາປະຈໍາການ ຢູ່ ທຫລ ເປັນ ຮອງຜູ້ອໍານວຍການ ບໍລິສັດ ຂສລ.







ໃນໂອກາດດັ່ງກ່າວ, ທ່ານ ນາງ ວັດທະນາ ດາລາລອຍ ໄດ້ໂອ້ລົມຕໍ່ພິທີດັ່ງກ່າວວ່າ: ພິທີປະກາດປັບປຸງການຈັດຕັ້ງຂອງບໍລິສັດຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ໃນມື້ນີ້ເປັນເຫດການທີ່ມີຄວາມໝາຍຄວາມສຳຄັນຕໍ່ ຂສລ ເຊິ່ງການແຕ່ງຕັ້ງພະນັກງານຂັ້ນນຳພາ-ຫຼັກແຫຼ່ງ ແລະ ການເຂົ້າຮັບອຸດໜູນບຳນານ ແມ່ນໄດ້ປະຕິບັດມາເປັນປົກກະຕິ ເຊິ່ງເປັນຫຼັກການ ແລະ ລະບຽບການໃນການປະຕິບັດວຽກງານ. ທ່ານຍັງໄດ້ເນັ້ນໃຫ້ສະມາຊິກພັກ-ພະນັກງານທຸກຄົນຈົ່ງສືບຕໍ່ຂະຫຍາຍດ້ານຕັ້ງໜ້າ ແລະ ປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍຂອງຕົນໃຫ້ໄດ້ຮັບຜົນສຳເລັດ ແລະ ມີປະສິດທິພາບສູງ.

#ຂ່າວ ແລະ ພາບໂດຍ: ນາງປາໃນ ພັນທະລາ

# ໃຊ້ເງິນຕາຊະຊາຍ ຜິດກົດໝາຍບ້ານເມືອງ